ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາປະຊາຊົນ ແຂວງໄຊຍະບູລີ

ເລກທີ 51 /ສພຂ.ຊຍ

ໄຊຍະບູລີ, ວັນທີ 23ກໍລະກົດ 2025

# ມະຕິ

## ກອງປະຊຸມສະພາປະຊາຊົນ ແຂວງໄຊຍະບູລີ ວ່າດ້ວຍການຮັບຮອງເອົາ ບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງ ຂອງເຈົ້າແຂວງ ຈຳນວນ 3 ສະບັບ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ປີ 2025 ມາດຕາ 78 ກ່ຽວກັບ ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ມາດຕາ 60 ຂອງກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020;
- ອີງຕາມ ມາດຕາ 124 ຂອງກົດໝາຍວ່າດ້ວຍ ການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ບົດລາຍງານ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ສະບັບເລກທີ 3461/ກປຂ.ຊຍ, ລົງວັນທີ 15 ກໍລະກົດ 2025, ບົດລາຍງານ ຂອງກອງບັນຊາການ ປກສ ແຂວງ ສະບັບເລກທີ 4166/ປກສ.ຊຍ, ລົງວັນທີ 09 ກໍລະກົດ 2025 ແລະ ບົດລາຍງານ ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ ສະບັບເລກທີ 281/ອພບຕ.ຊຍ, ລົງວັນທີ 7 ກໍລະກົດ 2025.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນຢ່າງເລິກເຊິ່ງ ຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານ ການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງ ຂອງເຈົ້າແຂວງ ຈຳນວນ 3 ສະບັບ, ໃນວາລະກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາປະຊາຊົນແຂວງ ຊຸດ II ຄັ້ງວັນທີ 23 ກໍລະກົດ 2025.

## ກອງປະຊຸມ ຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານ ກ່ຽວກັບປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງ ຂອງເຈົ້າແຂວງ ຈຳນວນ 3 ສະບັບ**

ກອງປະຊຸມເຫັນດີຮັບຮອງເອົາບົດລາຍງານ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງ ຂອງເຈົ້າແຂວງ ຈຳນວນ 3 ສະບັບ ຄື:

1. ບົດລາຍງານ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ວ່າດ້ວຍການຄຸ້ມຄອງ, ນຳໃຊ້ ແລະ ການອານຸລັກຊ້າງບ້ານ ສະບັບເລກທີ 979/ຈຂ.ຊຍ, ລົງວັນທີ 13 ກັນຍາ 2017;

2. ບົດລາຍງານ ຂອງກອງບັນຊາການ ປກສ ແຂວງ ວ່າດ້ວຍການສ້າງຕັ້ງກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ (ສະບັບປັບປຸງ) ເລກທີ 1366/ຈຂ.ຊຍ, ລົງວັນທີ 22 ກັນຍາ 2022;
3. ບົດລາຍງານ ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ ວ່າດ້ວຍການຄຸ້ມຄອງພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີ (ສະບັບປັບປຸງ) ເລກທີ 1025/ຈຂ.ຊຍ, ລົງວັນທີ 22 ພະຈິກ 2022.

**ມາດຕາ 2 ຮັບຮອງເອົາທິດທາງ ແລະ ມາດຕະການແກ້ໄຂ**

ກອງປະຊຸມເຫັນດີ ເອົາຮັບຮອງບັນດາທິດທາງ ແລະ ມາດຕະການແກ້ໄຂ ໃນຕໍ່ໜ້າ ສະເໜີໂດຍພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ, ກອງບັນຊາການ ປກສ ແຂວງ, ອົງການພັດທະນາ ແລະ ບໍລິຫານຕົວເມືອງ ທີ່ໄດ້ສະເໜີຕໍ່ກອງປະຊຸມ ດັ່ງນີ້. ກອງປະຊຸມສະເໜີໃຫ້ 3 ພາກສ່ວນ ເອົາໃຈໃສ່ຈັດຕັ້ງປະຕິບັດທິດທາງ, ມາດຕະການແກ້ໄຂ ລວມ ແລະ ສະເພາະ ເພີ່ມເຕີມ ດັ່ງນີ້:

**1. ທິດທາງ, ມາດຕະການແກ້ໄຂ ລວມ:**

1) ເພີ່ມທະວີການນຳພາ-ຊີ້ນຳ ຂອງຄະນະພັກ-ຄະນະນຳ ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ, ກອງບັນຊາການ ປກສ ແຂວງ, ອົງການພັດທະນາ ແລະ ບໍລິຫານຕົວເມືອງ ໃນການໂຄສະນາເຜີຍແຜ່ນິຕິກຳ 3 ສະບັບ ໃຫ້ກວ້າງຂວາງ, ເລິກເຊິ່ງ ທົ່ວເຖິງ ທຸກເປົ້າໝາຍໃນສັງຄົມ;

2) ຮີບຮ້ອນປະສານສົມທົບ ກັບ ພາກສ່ວນກ່ຽວຂ້ອງ ຄົ້ນຄວ້າພັນຂະຫຍາຍມາດຕາ ຂອງແຕ່ລະນິຕິກຳ ເພື່ອໃຫ້ໄດ້ຮັບການຈັດຕັ້ງປະຕິບັດໄດ້ໂດຍໄວ ພ້ອມກັນນັ້ນກໍໃຫ້ສືບຕໍ່ຄົ້ນຄວ້າ ແລະ ປັບປຸງບາງເນື້ອໃນ, ໝວດ, ມາດຕາ ຂອງແຕ່ລະນິຕິກຳ ທີ່ເຫັນວ່າບໍ່ສອດຄ່ອງ ໃຫ້ມີເນື້ອໃນຮັດກຸມ, ຄົບຖ້ວນ ແລະ ສາມາດຈັດຕັ້ງປະຕິບັດໄດ້;

3) ສືບຕໍ່ພົວພັນ ແລະ ປະເມີນ ຜົນການຈັດຕັ້ງປະຕິບັດນິຕິກຳ ໃນຂົງເຂດຄວາມຮັບຜິດຊອບຂອງຕົນ ທີ່ຍັງຄ້າງຄາ ເປັນແຕ່ລະໄລຍະ ເພື່ອແກ້ໄຂບັນຫາໃຫ້ທັນກັບສະພາບການ ແລະ ແທດເໝາະກັບສະພາບຄວາມເປັນຈິງຂອງສັງຄົມ ໃນແຕ່ລະໄລຍະ;

4) ສ້າງຄວາມຮັບຮູ້ເຂົ້າໃຈໃຫ້ພໍ່ແມ່ປະຊາຊົນ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ໃຫ້ມີຄວາມເຂົ້າໃຈຕໍ່ກັບບັນດານິຕິກຳດັ່ງກ່າວ ໃຫ້ຫຼາຍຂຶ້ນ;

5) ຍົກສູງຄວາມສາມາດ, ຄວາມຮັບຜິດຊອບ ຂອງກອງເລຂາ ແລະ ຄະນະຮັບຜິດຊອບ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານດັ່ງກ່າວ ໃຫ້ຫຼາຍຂຶ້ນກວ່າເກົ່າ;

6) ເອົາໃຈໃສ່ໃນການຈັດເກັບ ແລະ ຄຸ້ມຄອງລາຍຮັບ-ລາຍຈ່າຍໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມລະບຽບການ.

**2. ທິດທາງ, ມາດຕະການແກ້ໄຂ ສະເພາະ**

1) ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ, ນຳໃຊ້ ແລະ ການອານຸລັກຊ້າງບ້ານ: ຄົ້ນຄວ້າປັບປຸງເນື້ອໃນ ບາງມາດຕາ ຄື: ມາດຕາ 2 ຫາ ມາດຕາ 9 ແລະ ມາດຕາ 14, 17, 20, 21 ທີ່ເຫັນວ່າ ຍັງບໍ່ສອດຄ່ອງໃນການຈັດຕັ້ງປະຕິບັດ;

2) ຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ (ສະບັບປັບປຸງ):

- ປັບປຸງເນື້ອໃນ ມາດຕາ 7, 8, 9, 10, 12 ແລະ ມາດຕາ 18;
- ປັບປຸງກົນໄກປະສານງານ ຂອງຄະນະຮັບຜິດຊອບ ກັບ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ມີຄວາມກົມກຽວ ເພື່ອເຮັດໃຫ້ນິຕິກຳດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ;
- ປັບປຸງກອງເລຂາ ແລະ ຄະນະຮັບຜິດຊອບຄຸ້ມຄອງກອງທຶນ ໃຫ້ສອດຄ່ອງ ເພື່ອປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ໃຫ້ໄດ້ຮັບຜົນດີ.

3) ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ, ພັດທະນາ ແລະ ບໍລິຫານຕົວເມືອງ ໄຊຍະບູລີ (ສະບັບປັບປຸງ): ຄົ້ນຄວ້າປັບປຸງເນື້ອໃນ ມາດຕາ 13 ຫາ ມາດຕາ 16 ແລະ ມາດຕາ 24.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບພະແນກກະສິກໍາ ແລະ ສິ່ງແວດລ້ອມແຂວງ, ກອງບັນຊາການ ປກສ ແຂວງ ແລະ ອົງການພັດທະນາ ແລະ ບໍລິຫານຕົວເມືອງ, ພາກສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ເປັນຮູບປະທໍາ;

2. ມອບໃຫ້ອົງການປົກຄອງແຂວງ ຊີ້ນໍາພາກສ່ວນກ່ຽວຂ້ອງ ຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ;

3. ມອບໃຫ້ຄະນະປະຈໍາສະພາປະຊາຊົນແຂວງ ຊີ້ນໍາຄະນະກໍາມະການ, ຄະນະເລຂາທິການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງ ເພີ່ມທະວີຕິດຕາມກວດກາການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກໍານົດໄວ້ໃນລັດຖະທໍາມະນູນ ແລະ ກົດໝາຍ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິລັນ ຄໍາພັນເພັງ